ສົກປີນີ້ ຂະແຫນງກະສິກຳ ແລະ ປ່າໄມ້ ຈະໃຊ້ງົບ 100 ກວ່າຕື້, ເນັ້ນພັດທະນາການຜະລິດ
Thursday, 07 March 2013 06:12
ເພື່ອເຮັດໃຫ້ຄາດຫມາຍ ສູ້ຊົນຂອງແຜນ ພັດທະນາເສດຖະກິດ-ສັງຄົມ
ມີການຂະຫຍາຍຕົວ ໃນລະດັບ 8,3%, ລວມຍອດຜະລິດຕະພັນ ຂອງຂະແຫນງກະສິກຳ ແລະ
ປ່າໄມ້ ເພີ່ມຂຶ້ນໃນ ລະດັບ 3,3% ຂຶ້ນໄປ, ເຊິ່ງກວມເອົາ 25,9% ຂອງ ຈີດີພີ
ລວມແຫ່ງຊາດ ແລະ ໃນສົກປີ 2012-2013 ນີ້, ກະຊວງກະສິກຳ ແລະ ປ່າໄມ້ເປີດເຜີຍ
ຈະໃຊ້ງົບປະມານ 101 ຕື້ກີບ, ໃນຈຳນວນ 212 ໂຄງການ
ເນັ້ນພັດທະນາການຜະລິດເປັນສິນຄ້າ.

ກະສິກຳ ແລະ ປ່າໄມ້ ເປັນຂະແຫນງການຫນຶ່ງ ທີ່ສຳຄັນ ແລະ ເປັນຫນຶ່ງໃນ 3
ເສົາຄ້ຳສຳຄັນ ຂອງການພັດທະນາເສດຖະກິດແຫ່ງຊາດ,
ທີ່ຈະຊ່ວຍໃຫ້ການເກັບລາຍຮັບ ເຂົ້າງົບປະມານແຫ່ງຊາດ
ໃນແຕ່ລະປີບັນລຸຕາມແຜນການ ຫລື ລື່ນແຜນ. ສະນັ້ນ,
ຂະແຫນງການດັ່ງກ່າວຈິ່ງມີຄວາມຕ້ອງການແຫລ່ງທຶນສູງ ເພື່ອພັດທະນາ.

ຕາມຂໍ້ມູນແຜນການສົກປີ 2012-2013 ຂອງກະຊວງກະສິກຳ ແລະ ປ່າໄມ້ໃຫ້ຮູ້ວ່າ:
ໃນສົກປີຜ່ານມາລັດຖະບານ ໄດ້ວາງງົບປະມານ ໃຫ້ກະຊວງກະສິກຳ ແລະ ປ່າໄມ້
ຄຸ້ມຄອງຈຳນວນ 204 ໂຄງການ, ເປັນມູນຄ່າ 84 ຕື້ກີບ, ໃນນັ້ນ ຈຳນວນ 43 ໂຄງການ,
ມູນຄ່າ 15,48 ຕື້ ກວ່າກີບ, ແມ່ນໃຊ້ສຳລັບວຽກດັດສົມ ສົ່ງເສີມວິຊາການ ແລະ
ການລົງຊຸກຍູ້ວຽກງານ ຂອງຄະນະການນຳກະຊວງ ແລະ ກົມ, ສ່ວນອີກ 161 ໂຄງການ,
ຄິດເປັນ 68,50 ຕື້ກີບ, ໃນນັ້ນ ເປັນພູດປົກກະຕິ 136 ໂຄງການ, ມູນຄ່າ 14 ຕື້ກີບ,
ໃນນີ້ ລວມມີການລົງທຶນໃສ່ດ້ານວິຊາການ 116 ໂຄງການ, ເປັນມູນຄ່າທັງຫມົດ
8,28 ຕື້ກີບ ແລະ ກໍ່ສ້າງສ້ອມແປງພື້ນຖານໂຄງລ່າງກະຊວງ 20 ໂຄງການ, ລວມແລ້ວ
5,72 ຕື້ກີບ, ສ່ວນພູດກອງທຶນ ພັດທະນາຊັບພະຍາກອນປ່າໄມ້ 11 ໂຄງການ, ມູນຄ່າ
15 ຕື້ ກີບ (ໄດ້ຕົວຈິງ 8 ຕື້ກີບ), ພູດນ້ຳເທີນ 2 ມີ 2 ໂຄງການ, ສະເລ່ຍ 1,5 ຕື້ກີບ ແລະ
ພູດບ້ວງລົງທຶນກໍ່ສ້າງ, ສ້ອມແປງຊົນລະປະທານຂອງແຂວງ ທີ່ເກາະຫ້ອຍເພດານ
ກະຊວງໃນຈຳນວນ 12 ໂຄງ ການ, ເປັນມູນຄ່າ 38 ຕື້ກີບ.

ນອກຈາກນີ້ ກະຊວງກະສິ ກຳ ແລະ ປ່າໄມ້ຍັງໄດ້ງົບປະມານພິເສດ
ຈາກງົບປະມານປົກກະຕິອີກ 2 ໂຄງການ, ເປັນບ້ວງຄົ້ນຄວ້າວິທະຍາສາດ 2 ໂຄງການ,
ມູນຄ່າ 5 ຕື້ກີບ ແລະ ໂຄງການຄົ້ນຄວ້າແນວພັນງົວ 2,5 ຕື້ກີບ ແລະ ແນວພັນສາລີ
2,5 ຕື້ກີບ.

ຂະນະທີ່ສົກປີ 2012-2103 ນີ້, ກະຊວງກະສິກຳ ແລະ ປ່າໄມ້ ຄຸ້ມຄອງທັງຫມົດ 212
ໂຄງການ, ລວມມູນຄ່າ 101 ຕື້ກີບ, ເມື່ອທຽບໃສ່ສົກປີຜ່ານມາ (2011-2012)
ເພີ່ມຂຶ້ນປະມານ 20%, ເຊິ່ງໃນນັ້ນງົບລົງທຶນຂອງລັດ 84,8 ຕື້ກີບ,
ປັດໄຈທີ່ເພີ່ມຂຶ້ນນັ້ນຍ້ອນມີໂຄງການຊົນລະປະທານບູລິມະສິດຂອງ
ລັດຖະບານທີ່ປະຕິບັດຢູ່ແຂວງລວມຢູ່ນຳ.
 1 / 2

ສົກປີນີ້ ຂະແຫນງກະສິກຳ ແລະ ປ່າໄມ້ ຈະໃຊ້ງົບ 100 ກວ່າຕື້, ເນັ້ນພັດທະນາການຜະລິດ
Thursday, 07 March 2013 06:12

ງົບປະມານດັ່ງກ່າວເມື່ອສົມທຽບໃສ່ຫນ້າວຽກ ແລະ
ຄວາມຮັບຜິດຊອບຂອງກະຊວງແລ້ວແມ່ນບໍ່ພຽງພໍ
ໂດຍສະເພາະງົບປະມານທີ່ນຳໃຊ້ເຂົ້າໃນວຽກງານຈຸດສຸມຂອງ ລັດຖະບານເຊັ່ນ:
ວຽກງານສາມສ້າງ, ຈຸດສຸມຍົກສະມັດຕະພາບການຜະລິດຂອງກະຊວງ,
ວຽກງານພັດທະນາບັນດາວິທະຍາໄລ ແລະ
ວຽກງານການຈັດຕັ້ງກົງຈັກການຈັດຕັ້ງທີ່ຢູ່ພາຍໃນກະຊວງ ແລະ ທ້ອງຖິ່ນ,
ສ່ວນທຶນຊ່ວຍເຫລືອລ້າ ແລະ ກູ້ຢືມຂອງບັນດາໂຄງການຂອງຂະແຫນງກະສິກຳ ແລະ
ປ່າໄມ້ ແມ່ນຈະສືບຕໍ່ໂອນທຶນຮອນ, ສິ່ງອຳນວຍຄວາມສະດວກ ແລະ
ອຸປະກອນໃຫ້ແກ່ທ້ອງຖິ່ນ (ແຂວງ, ເມືອງ) ເປັນເຈົ້າການໃນການຄຸ້ມຄອງ ແລະ ນຳໃຊ້.

ເຖິງຢ່າງໃດກໍ່ຕາມ ການພັດທະນາຂະແຫນງ
ກະສິກຳຍັງຕ້ອງເຮັດແບບມີຈຸດສຸມ ແລະ ຕິດພັນກັບ ການພັດທະນາເຂດແຄ້ວນ,
ທ່າແຮງ, ສະພາບຈຸດພິເສດຂອງທີ່ຕັ້ງ, ພື້ນທີ່, ຄວາມໄດ້ປຽບ ແລະ ກາລະໂອກາດ
ໂດຍການນຳໃຊ້ທ່າແຮງຂອງຊັບພະຍາກອນທຳມະຊາດ, ຄວາມຫລາກຫລາຍທາງ
ດ້ານນິເວດກະສິກຳ, ຄວາມເຊື່ອຫມັ້ນທາງດ້ານການເມືອງ ແລະ
ມູນເຊື້ອຄວາມດຸຫມັ່ນ ຂອງຊາວກະສິກອນລາວເພື່ອຫັນເອົາເຂດການຜະລິດ
ທີ່ໄດ້ກຳນົດຈັດສັນແລ້ວມາເປັນ ເຂດການຜະລິດສະບຽງອາຫານ ແລະ
ຜະລິດສິນຄ້າຢ່າງແຂງແຮງ.

ທີ່ມາຂອງຂ່າວ:
 2 / 2